# ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວເຮັດວຽກຢູ່ ແຂວງອຸດົມໄຊ ແລະ ແຂວງຜົ້ງສາລີ



ໃນວັນທີ 17-19 ກໍລະກົດທີ່ຜ່ານມາ, ທ່ານ ພູເພັດ ຄຳພູນວົງ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍບັນດາຄະນະກົມ-ຄະນະອຳນວຍການທະນາຄານຂອງລັດ ໄດ້ເຄື່ອນໄຫວເຮັດວຽກກັບບັນດາການນຳແຂວງ ແລະ ຊີ້ນຳແກ້ໄຂວຽກງານຢູ່ບັນດາສາຂາຂອງທະນາຄານຂອງລັດຢູ່ແຂວງອຸດົມໄຊ ແລະ ແຂວງຜົ້ງສາລີ.

ສຳລັບຢູ່ແຂວງອຸດົມໄຊ,ໃນວັນທີ 17 ກໍລະກົດ ຄະນະທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກ ທ່ານ ຄຳຫຼ້າ ລີ້ງນະສອນ ເລຂາຄະນະພັກແຂວງເຈົ້າແຂວງໆອຸດົມໄຊ ເຊິ່ງການພົບປະກັນໃນຄັ້ງນີ້ທັງສອງຝ່າຍໄດ້ແຈ້ງສະພາບການເຄື່ອນໄຫວຂອງຕົນໃຫ້ກັນຊາບ ໂດຍສະເພາະແມ່ນຜົນສຳເລັດໃນການຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈມະຕິ VIII ຂອງສູນກາງພັກ, ຈາກນັ້ນທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍ່ໄດ້ມອບເງິນສົດຈຳນວນ 14 ລ້ານກີບ ໃຫ້ແກ່ທ່ານເຈົ້າແຂວງດັ່ງກ່າວ ເພື່ອເປັນການປະກອບສ່ວນເຂົ້າໃນການສ້າງພະພຸດທະຮູບ ທີ່ໄດ້ປະດິດສະຖານໄວ້ບົນໂນນພູໃຈການເມືອງ ເພື່ອໃຫ້ຊາວພຸດບໍລິສັດທີ່ມີຄວາມເຫຼື້ອມໃສໄດ້ເຄົາລົບ ແລະ ກາບໄຫວ້. ໃນຕອນແລງຂອງວັນດຽວກັນ ຄະນະ

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 27/07/2010

ທ່ານຜູ້ວ່າການ ກໍ່ໄດ້ເຂົ້າຮ່ວມພິທີທາງສາດສະໜາໃນການວາງເສົາຫຼັກຂອງໂຄງການກໍ່ສ້າງຫໍພັກຂອງທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ.

ໃນວັນທີ 19 ຂອງເດືອນດຽວກັນ,ທ່ານ ພູເພັດ ຄຳພູນວົງ ກໍ່ໄດ້ເຂົ້າຢ້ຽມຢາມພະນັກງານບຳນານ, ຈາກນັ້ນກໍ່ໄດ້ນຳພາຄະນະເຂົ້າຢ້ຽມ ແລະ ພົບປະ ທ່ານ ຄຳສານ ສຸວົງ ກຳມະການສູນກາງພັກ-ເຈົ້າແຂວງຜົ້ງສາລີ ໃນໂອກາດດັ່ງກ່າວທ່ານ ເຈົ້າແຂວງກໍ່ໄດ້ກ່າວເຖິງການພັດທະນາເສດຖະກິດ - ສັງຄົມຂອງແຂວງ ເຊິ່ງມີ 4 ທາງເລືອກ ແລະ 5 ຈຸດສຸມ, ພ້ອມນັ້ນທ່ານກໍ່ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການປະກອບສ່ວນຢ່າງຕັ້ງໜ້າຂອງບັນດາທະນາຄານຢູ່ທ້ອງຖິ່ນ ແລະໃນເວລາຕໍ່ມາທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍ່ໄດ້ມອບເງິນສົດຈຳນວນ 20 ລ້ານກີບ ເພື່ອປະກອບສ່ວນເຂົ້າໃນກອງປະຊຸມໃຫຍ່ ຄັ້ງທີ XI ຂອງອົງຄະນະພັກແຂວງຜົ້ງສາລີ ແລະ ຈາກນັ້ນ ທ່ານ ຜູ້ວ່າການກໍ່ໄດ້ເຂົ້າຮ່ວມເປັນປະທານໃນກອງປະຊຸມຖອດຖອນບົດຮຽນກ່ຽວກັບວຽກງານທະນາຄານຢູ່ແຂວງຜົ້ງສາລີ, ຜ່ານການເຄື່ອນໄຫວມີທັງດ້ານດີ ແລະ ຂໍ້ຄົງຄ້າງທີ່ຈະໄດ້ຮັບການແກ້ໄຂ ,ພ້ອມດຽວກັນນັ້ນ ທ່ານຜູ້ວ່າການ,ບັນດາຄະນະກົມ - ຄະນະອຳນວຍການທະນາຄານຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ປະກອບຄຳເຫັນ, ມີການເຈາະຈີ້ມ,ຊັກຖາມ ແລະ ແກ້ໄຂບັນຫາຕ່າງໆ ເພື່ອເຮັດໃຫ້ປະຊາຊົນໄດ້ເຂົ້າເຖິງແຫຼ່ງທຶນທະນາຄານຢ່າງງ່າຍດາຍ ແລະ ນຳໃຊ້ທຶນຮອນດັ່ງກ່າວເຂົ້າໃນການດຳເນີນທຸລະກິດ ແລະ ໃຫ້ມີປະສິດທິຜົນ,ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າດີຂື້ນເປັນກ້າວໆ.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 27/07/2010